ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 633 /ຈທວ
ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2023

# ແຈ້ງການ

**ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**
**ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ຂອງວິສາຫະກິດ ຈຳນວນ 1 ຫົວໜ່ວຍ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ເລກທີ 40/ຈທວ, ລົງວັນທີ 20 ມັງກອນ 2023;
- ອີງຕາມ ໜັງສືສະເໜີຂອງສວຍສາອາກອນປະຈຳນະຄອນຫຼວງວຽງຈັນ, ເລກທີ 1421/ສອ.ນວ, ລົງວັນທີ 21 ພະຈິກ 2023.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ຂອງວິສາຫະກິດ ຈຳນວນ 1 ຫົວໜ່ວຍ ຕາມໜັງສືສະເໜີຂອງສວຍສາອາກອນປະຈຳນະຄອນຫຼວງວຽງຈັນ, ສະບັບເລກທີ 1421/ສອ.ນວ, ລົງວັນທີ 21 ພະຈິກ 2023. ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ເປັນຕົ້ນໄປ;

2. ສຳລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ສະບັບເລກທີ 40/ຈທວ ລົງວັນທີ 20 ມັງກອນ 2023 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສວຍສາອາກອນປະຈຳນະຄອນຫຼວງວຽງຈັນ **ກ່ອນວັນທີ 31 ທັນວາ 2023** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ.

3. ຈຳນວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຖາວອນ ມີດັ່ງນີ້:

| ລຳດັບ | ເນື້ອໃນການໂຈະ | | ຊື່ວິສາຫະກິດ | ເລກລະຫັດ ວິສາຫະກິດ | ເລກປະຈຳຕົວ ຜູ້ເສຍອາກອນ |
|---|---|---|---|---|---|
| 1 | ຈຳນວນແຈ້ງໂຈະຖາວອນທັງໝົດ | 954 ຫົວໜ່ວຍ | ສາມາດກວດສອບໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ. | | |
| 2 | ຈຳນວນທີ່ຍັງເຫຼືອປັດຈຸບັນ | 952 ຫົວໜ່ວຍ | | | |
| 3 | ຍົກເລີກຜ່ານມາ | 1 ຫົວໜ່ວຍ | | | |
| 4 | ຍົກເລີກຄັ້ງນີ້ | 1 ຫົວໜ່ວຍ | ບໍລິສັດ ລາວຕ່າມເອີຣົບພົດຊອບການຄ້າ ຈຳກັດຜູ້ດຽວ | 01-00020370 | 512463120-9-00 |

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ກະຊວງອຸດສາຫະກຳ ແລະ ການຄ້າ
ເຈົ້າໜ້າທີ່ ທະບຽນວິສາຫະກິດ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ສຸລິຄຳ ແຈ້ງສະຫວ່າງ

22/11/22 Enterprise 900

(ສືບຕໍ່ໂຈະຖາວອນ)

ບ່ອນສົ່ງ:
- ສ່ວຍສາອາກອນປະຈຳ ນວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

Scanned with CamScanner